ເອກະສານຂໍ້ມູນພື້ນຖານໂຄງການສະບັບນີ້ແປເປັນພາສາລາວ ອີງຕາມສະບັບພາສາອັງກິດທີ່ເຜີຍແຜ່ໃນເວັບໄຊ້ ADB.org ລົງວັນທີ 12 ກໍລະກົດ 2017

ADB ASIAN DEVELOPMENT BANK

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ໂຄງການອະນຸລັກອ່າງໂຕ່ງແລະພັດທະນາພື້ນຖານໂຄງລ່າງຊົນນະບົດແບບຍືນຍົງ

| | |
|---|---|
| ຊື່ໂຄງການ | ໂຄງການອະນຸລັກອ່າງໂຕ່ງ ແລະ ພັດທະນາພື້ນຖານໂຄງລ່າງຊົນນະບົດແບບຍືນຍົງ |
| ໂຄງການເລກທີ | 50236-002 |
| ປະເທດ | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| ສະຖານະພາບໂຄງການ | ນຳສະເໜີແລ້ວ |
| ປະເພດໂຄງການ/ຮູບແບບຂອງການຊ່ວຍເຫຼືອ | ທຶນຊ່ວຍເຫຼືອລ້າ<br>ທຶນກູ້ຢືມ |
| ແຫຼ່ງທຶນ/ຈຳນວນ | **ທຶນຊ່ວຍເຫຼືອລ້າ: ໂຄງການອະນຸລັກອ່າງໂຕ່ງ ແລະ ພັດທະນາພື້ນຖານໂຄງລ່າງຊົນນະບົດແບບຍືນຍົງ**<br>ກູ້ຢືມຈາກແຫລ່ງທຶນປົກກະຕິ/ກອງທຶນພັດທະນາອາຊີ — US$ 4,70 ລ້ານ |

**ທຶນກູ້ຢືມ: ໂຄງການອະນຸລັກອ່າງໂຕ່ງ ແລະ ພັດທະນາພື້ນຖານໂຄງລ່າງຊົນນະບົດແບບຍືນຍົງ**

| | | |
|---|---|---|
| | ເງິນກູ້ຈາກແຫລ່ງທຶນປົກກະຕິ/ກອງທຶນພັດທະນາອາຊີ | US$ 30,00 ລ້ານ |
| ເປົ້າໝາຍຍຸດທະສາດ | ການເຕີບໂຕແບບຍືນຍົງທາງດ້ານສິ່ງແວດລ້ອມ<br>ການເຕີບໂຕທາງດ້ານເສດຖະກິດຢ່າງທົ່ວເຖິງກັນ | |
| ຕົວຂັບເຄື່ອນການປ່ຽນແປງ | ການປົກຄອງ ແລະ ການຍົກລະດັບຂີດຄວາມອາດສາມາດ<br>ການນໍາໃຊ້ຄວາມຮູ້<br>ການເປັນຄູ່ຮ່ວມມື | |
| ຂະແໜງການ/ຂະແໜງການສໍາຮອງ | **ກະສິກໍາ, ຊັບພະຍາກອນທໍາມະຊາດ ແລະ ການພັດທະນາຊົນນະບົດ** - ຊົນລະປະທານ - ການຄຸ້ມຄອງຊັບພະຍາກອນທໍາມະຊາດທາງນໍ້າ | |
| ວຽກງານການເຊື່ອມສານ ແລະ ຄວາມສະເໝີພາບບົດບາດຍິງ-ຊາຍ | ການເຊື່ອມສານວຽກງານສົ່ງເສີມບົດບາດຍິງຊາຍທີ່ມີປະສິດທິພາບ | |
| ເນື້ອໃນໂຄງການ | ໂຄງການດັ່ງກ່າວນີ້ມີຈຸດປະສົງແນໃສ່ແກ້ໄຂບັນຫາທີ່ຕິດພັນກັບການຄຸ້ມຄອງອ່າງໂຕ່ງ ແລະ ພື້ນຖານໂຄງລ່າງຊົນນະບົດທີ່ມີທ່າແຮງໃນການຜະລິດຢູ່ເຂດພູດອຍຢູ່ແຂວງພາກເໜືອຂອງ ສປປ ລາວ ໂດຍນໍາໃຊ້ໃນວິທີການວາງແຜນການນໍາໃຊ້ທີ່ດິນແບບຮອບດ້ານ ຊຶ່ງເປັນວິທີການທີ່ປະສົມປະສານລະຫວ່າງ ມາດຕະການປົກປ້ອງອ່າງໂຕ່ງທີ່ມີຄວາມເປັນໄປໄດ້ ແລະ ມາດຕະການກໍ່ສ້າງພື້ນຖານໂຄງລ່າງຊົນນະບົດ ແບບຍືນຍົງ ແລະ ທົນທານຕໍ່ສະພາບອາກາດ. ສໍາລັບວຽກການພັດທະນາຊົນນະບົດແບບຍືນຍົງ, ການກໍ່ສ້າງພື້ນຖານໂຄງລ່າງແລະການຄຸ້ມຄອງອ່າງໂຕ່ງ ທີ່ອີງໃສ່ລະບົບນິເວດເປັນຫຼັກຈະໄດ້ຮັບການພິຈາລະນາໄປພ້ອມໆກັນ. ຜົນກະທົບຂອງໂຄງການແມ່ນແນໃສ່ບັນລຸວຽກງານພັດທະນາຊົນນະບົດແບບຍືນຍົງແລະຢ່າງທົ່ວເຖິງກັນ. ຜົນໄດ້ຮັບຂອງໂຄງການແມ່ນແນໃສ່ຍົກລະດັບຂີດຄວາມສາມາດໃນການຜະລິດກະສິກໍາແບບຍືນຍົງ ທີ່ອີງໃສ່ກົນໄກການຕະຫຼາດເປັນຫຼັກ ແລະ ການຄຸ້ມຄອງຊັບພະຍາກອນທໍາມະຊາດຢູ່ຕາມເຂດອ່າງໂຕ່ງທີ່ເປັນເປົ້າໝາຍຂອງໂຄງການ. | |
| ເຫດຜົນຂອງໂຄງການ ແລະ ຄວາມເຊື່ອມໂຍງກັບຍຸດທະສາດແຫ່ງຊາດ/ພາກພື້ນ | ໂຄງການອະນຸລັກອ່າງໂຕ່ງ ແລະ ພັດທະນາພື້ນຖານໂຄງລ່າງຊົນນະບົດແບບຍືນຍົງທີ່ໄດ້ນໍາສະເໜີດັ່ງກ່າວນີ້ຈະຊ່ວຍເພີ່ມຜົນກໍາໄລຂອງການຜະລິດກະສິກໍາ, ຊັບພະຍາກອນທໍາມະຊາດ ແລະ ຂະແໜງການພັດທະນາຊົນນະບົດ ໂດຍການຍົກລະດັບຂີດຄວາມສາມາດການຜະລິດກະສິກໍາ ທີ່ອີງ | |

| | |
|---|---|
| | ໃສ່ກົນໄກການຕະຫຼາດ ຄຽງຄູ່ກັບການຄຸ້ມຄອງຊັບພະຍາກອນທຳມະຊາດ. ໂຄງການນີ້ແນໃສ່ (1) ຍົກລະດັບພື້ນຖານໂຄງລ່າງຊົນນະປົດທີ່ມີທ່າແຮງຕໍ່ການຜະລິດເພື່ອໃຫ້ມີຄວາມທົນທານຕໍ່ສະພາບອາກາດ, ມີປະສິດທິຜົນ ແລະ ມີຄວາມຍືນຍົງ; (2) ປັບປຸງການຄຸ້ມຄອງວຽກງານການນຳໃຊ້ທີ່ດິນໃນເຂດບໍລິເວນອ່າງໂຕ່ງ ທີ່ເປັນພື້ນຖານໂຄງລ່າງຊົນນະປົດທີ່ມີທ່າແຮງຕໍ່ການຜະລິດ; ແລະ (3) ຍົກລະດັບຂີດຄວາມສາມາດຂອງພະນັກງານ ແລະ ສະຖາບັນທີ່ກ່ຽວຂ້ອງເພື່ອໃຫ້ສາມາດຄຸ້ມຄອງອ່າງໂຕ່ງແບບຍືນຍົງແລະສາມາດຈັດຕັ້ງປະຕິບັດການຜະລິດກະສິກຳຢ່າງຖືກຕ້ອງແລະເໝາະສົມ. |
| ຜົນກະທົບ | ການພັດທະນາຊົນນະປົດແບບຍືນຍົງ ແລະ ທົ່ວເຖິງກັນໄດ້ຮັບການບັນລຸ. |
| ຜົນໄດ້ຮັບ | ຂີດຄວາມສາມາດໃນການຜະລິດກະສິກຳແບບຍືນຍົງທີ່ອີງໃສ່ກົນໄກການຕະຫຼາດເປັນຫຼັກ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດຢູ່ຕາມເຂດອ່າງໂຕ່ງ ທີ່ເປັນເປົ້າໝາຍຂອງໂຄງການໄດ້ຮັບການຍົກລະດັບ. |
| ຜົນອອກ | ພື້ນຖານໂຄງລ່າງຊົນນະປົດທີ່ມີທ່າແຮງຕໍ່ການຜະລິດໄດ້ຮັບການຍົກລະດັບ ເພື່ອໃຫ້ທົນທານຕໍ່ສະພາບອາກາດ, ມີປະສິທິຜົນ ແລະ ມີຄວາມຍືນຍົງ.<br><br>ວຽກງານຄຸ້ມຄອງການນຳໃຊ້ທີ່ດິນໃນເຂດອ່າງໂຕ່ງພາຍໃນເຂດທີ່ພື້ນຖານໂຄງລ່າງຊົນນະປົດທີ່ມີທ່າແຮງຕໍ່ການຜະລິດໄດ້ຮັບການປັບປຸງ.<br><br>ຍົກລະດັບຂີດຄວາມສາມາດຂອງພະນັກງານແລະສະຖາບັນ ເພື່ອໃຫ້ສາມາດຄຸ້ມຄອງອ່າງໂຕ່ງແບບຍືນຍົງ ແລະ ຈັດຕັ້ງປະຕິບັດການຜະລິດກະສິກຳຢ່າງຖືກຕ້ອງເໝາະສົມ. |
| ສະຖານທີ່ຕັ້ງທາງພູມສາດ | |

**ປະເພດຂອງວຽກງານປົກປ້ອງ**

| | |
|---|---|
| ດ້ານສິ່ງແວດລ້ອມ | B |
| ດ້ານການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ | B |
| ດ້ານການປົກປ້ອງຄົນພື້ນເມືອງ | B |

**ບົດສະຫຼຸບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ**

ດ້ານສິ່ງແວດລ້ອມ

ດ້ານການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ

ດ້ານການປົກປ້ອງຄົນເຜົ່າພື້ນເມືອງ

**ການປຶກສາຫາລື, ການມີສ່ວນຮ່ວມ ແລະ ການສື່ສານກັບພາກສ່ວນທີ່ກ່ຽວຂ້ອງ**

ໃນໄລຍະການອອກແບບໂຄງການ

ໃນໄລຍະການຈັດຕັ້ງປະຕິບັດໂຄງການ

**ພະນັກງານທີ່ຮັບຜິດຊອບ**

| | |
|---|---|
| ຜູ້ຮັບຜິດຊອບໂຄງການຝ່າຍເອດີບີ | ທ່ານ Thuy Trang Dang |
| ກົມທີ່ຮັບຜິດຊອບໂຄງການໃນເອດີບີ | ກົມອາຊີຕາເວັນອອກສ່ຽງໃຕ້ |
| ພະແນກຂອງ ເອດີບີ ທີ່ຮັບຜິດຊອບໂຄງການ | ພະແນກສິ່ງແວດລ້ອມ, ຊັບພະຍາກອນທໍາມະຊາດ ແລະ ກະສິກໍາ, ກົມອາຊີຕາເວັນອອກສ່ຽງໃຕ້ |
| ອົງການຄຸ້ມຄອງໂຄງການຝ່າຍລັດຖະບານ | **ກົມແຜນການ, ກະຊວງກະສິກໍາ ແລະ ປາໄມ້**<br>**ທ່ານໄຊພຣາເດດ ຈຸລະມະນີ, ຫົວໜ້າກົມ**<br>xaypladethchoulamany@yahoo.com<br>ຖະໜົນລ້ານຊ້າງ, ວົງວຽນປະຕູໄຊ, ຕູ້ໄປສະນີ ເລກທີ 811 |

**ຕາຕະລາງເວລາ**

| | |
|---|---|
| ຜ່ານເອກະສານແນວທາງຂອງໂຄງການ | 31 ພຶດສະພາ 2017 |
| ລົງທາບທາມຂໍ້ມູນ | 11 ມິຖຸນາ 2018 ເຖິງ 22 ມິຖຸນາ 2018 |
| ກອງປະຊຸມ MRM | 06 ສິງຫາ 2018 |
| ອະນຸມັດ | - |
| ລົງທວນຄືນຄວາມຄືບໜ້າຂອງໂຄງການ ຄັ້ງຫຼ້າສຸດ | - |
| ຂໍ້ມູນພື້ນຖານໂຄງການສະບັບຫຼ້າສຸດ | 08 ມິຖຸນາ 2017 |

ເອກະສານຂໍ້ມູນພື້ນຖານໂຄງການປະກອບມີຂໍ້ມູນ ແລະ ຕົວເລກໂດຍສັງເຂບກ່ຽວກັບໂຄງການ ຫຼື ແຜນງານໃດໜຶ່ງ: ເນື່ອງຈາກວ່າຂໍ້ມູນພື້ນຖານໂຄງການບັນຈຸຂໍ້ມູນກ່ຽວກັບວຽກງານທີ່ກໍາລັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດ. ສະນັ້ນ, ຂໍ້ມູນບາງຢ່າງອາດຈະບໍ່ໄດ້ລວມຢູ່ໃນສະບັບເບື້ອງຕົ້ນດັ່ງກ່າວນີ້ ແຕ່ວ່າຈະໄດ້ຮັບການດັດແກ້ ແລະ ປັບປຸງເມື່ອມີຂໍ້ມູນເພີ່ມຕື່ມ. ຂໍ້ມູນກ່ຽວກັບບັນດາໂຄງການທີ່ໄດ້ຖືກນໍາສະເໜີແມ່ນຂໍ້ມູນຄາດຄະເນໃນເບື້ອງຕົ້ນເທົ່ານັ້ນ.

ທະນາຄານພັດທະນາອາຊີນໍາສະເໜີຂໍ້ມູນທີ່ມີໃນເອກະສານຂໍ້ມູນພື້ນຖານໂຄງການ ເພື່ອຮັບໃຊ້ພຽງແຕ່ເປັນແຫຼ່ງຂໍ້ມູນສໍາລັບຜູ້ນໍາໃຊ້ຂອງຕົນເທົ່ານັ້ນ ໂດຍບໍ່ມີເຈດຕະນາຮັບປະກັນໃດໆທັງສິ້ນ. ໃນຂະນະທີ່ທະນາຄານພັດທະນາອາຊີໄດ້ທຸ້ມເທຄວາມພະຍາຍາມ ເພື່ອນໍາສະເໜີເນື້ອໃນໃຫ້ມີຄຸນນະພາບສູງສຸດ, ແຕ່ວ່າ ຂໍ້ມູນທີ່ນໍາສະເໜີ "ໃນທີ່ນີ້" ປາດສະຈາກການຮັບປະກັນໃດໆທັງສິ້ນ ບໍ່ວ່າຈະເປັນການສະແດງຄວາມຄິດເຫັນ ຫຼື ການຕີຄວາມໝາຍ ລວມທັງ ປາດສະຈາກການຈໍາກັດການຮັບປະກັນເພື່ອການຄ້າ, ຄວາມເໝາະສົມເພື່ອຈຸດປະສົງສະເພາະໃດໜຶ່ງ, ແລະ ການບໍ່ລະເມີດ. ເວົ້າສະເພາະ, ທະນາຄານພັດທະນາອາຊີຈະບໍ່ດໍາເນີນການຮັບປະກັນ ຫຼື ຮັບຮອງຄວາມຖືກຕ້ອງ ຫຼື ຄວາມສົມບູນຂອງເນື້ອໃນຂໍ້ມູນເຫຼົ່ານີ້.